# ທຄຕລ ປະກອບສ່ວນຊຸກຍູ້ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ

ໃນຕອນເຊົ້າວັນທີ 5 ມັງກອນ ທີ່ຫ້ອງວ່າການສູນກາງພັກ, **ທ່ານ ນາງ ສາຍສະໝອນ ຈັນທະຈັກ** ຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ປະກອບສ່ວນ ມອບເງິນ ແລະ ເຄື່ອງທີ່ລະນຶກຕ່າງໆ ເພື່ອຊຸກຍູ້ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ທີ່ຈັດຂຶ້ນ ໃນລະຫວ່າງວັນທີ 6-8 ມັງກອນ 2026 ຢູ່ນະຄອນຫຼວງວຽງຈັນ, ຕາງໜ້າຮັບໂດຍ **ທ່ານ ສັນຕິພາບ ພົມວິຫານ** ລັດຖະມົນຕີກະຊວງການເງິນ. ໃນໂອກາດນີ້, **ທ່ານ ສັນຕິພາບ ພົມວິຫານ** ໄດ້ກ່າວສະແດງຄວາມຂອບໃຈ ຕໍ່ ທຄຕລ ທີ່ເຫັນໄດ້ຄວາມສຳຄັນ ເຮັດໃຫ້ບັ້ນດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກດຳເນີນໄປຕາມເປົ້າໝາຍ ແລະ ຜົນສຳເລັດ ທີ່ວາງໄວ້.

---




ພ້ອມກັນນັ້ນ, ໃນວັນທີ 12 ມັງກອນ 2026 ພາຍຫຼັງສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ, ທຄຕລ ໄດ້ຮັບກຽດເຂົ້າຮ່ວມພິທີມອບ-ຮັບ ໃບກຽດຕິຄຸນ ໃຫ້ກຽດມອບໂດຍ **ທ່ານ ສະເຫຼີມໄຊ ກົມມະສິດ** ຮອງນາຍົກລັດຖະມົນຕີ ແລະ ຕາງໜ້າຮັບໂດຍ **ທ່ານ ນ. ສາຍສະໝອນ ຈັນທະຈັກ** ຜູ້ອຳນວຍການ ທຄຕລ



